ປຶ້ມຂໍ້ມູນບ້ານເລກທີ 09

ຂໍ້ມູນປະຫວັດຄວາມເປັນມາ, ຊີວິດການເປັນຢູ່, ທຳມະຊາດ ແລະ ແຜນທີ່

ປຶ້ມຂໍ້ມູນບ້ານ

ຂອງ

ບ້ານ ຍາງ

ເມືອງ ພິນ, ແຂວງ ສະຫວັນນະເຂດ

[ສະບັບທີ 01]

ວັນທີ 19 ເດືອນ 03 ປີ 2021

ຂຽນໂດຍ: ອົງການປົກຄອງບ້ານ ຍາງ Nyang Village Authority

ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (JVC)

ປຶ້ມຂໍ້ມູນບ້ານເລກທີ 09

ຂໍ້ມູນປະຫວັດຄວາມເປັນມາ, ຊີວິດການເປັນຢູ່, ທຳມະຊາດ ແລະ ແຜນທີ່

ປຶ້ມຂໍ້ມູນບ້ານ

ຂອງ

ບ້ານ ຍາງ

ເມືອງ ພີນ, ແຂວງ ສະຫວັນນະເຂດ

[ສະບັບທີ 01]

ວັນທີ 19 ເດືອນ 03 ປີ 2021

ຂຽນໂດຍ: ອົງການປົກຄອງບ້ານ ຍາງ Nyang Village Authority

ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (JVC)

ຊື່ປຶ້ມ

ປຶ້ມຂໍ້ມູນບ້ານ ຂໍ້ມູນປະຫວັດຄວາມເປັນມາ, ຊີວິດການເປັນຢູ່, ທຳມະຊາດ ແລະ ແຜນທີ່ຂອງບ້ານ ຍາງ, ເມືອງ ພິນ, ແຂວງ ສະຫວັນນະເຂດ [ສະບັບທີ 01] (ເລກທີ 09 ຂອງຊຸດປຶ້ມຂໍ້ມູນບ້ານ).

ຂຽນໂດຍ

ອົງການປົກຄອງບ້ານ ຍາງ Nyang Village Authority
ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (JVC)

ຜູ້ທີ່ຂຽນທາງບ້ານ

ທ. ບຸນກົ່ງ ໄຊຍະວົງ (ນາຍບ້ານ), ທ. ຄຳບົ່ງ (ຮອງນາຍບ້ານ), ທ. ຄຳປານ (ຮອງນາຍບ້ານ), ທ. ອາຍັນ (ກອງຫຼອນບ້ານ), ທ. ຕຸ້ຍ (ກອງຫຼອນ), ທ. ອາດາວ ພົມມະຊັກ (ປ້ອງກັນບ້ານ), ທ. ກາດານ ສົມບັດ (ເຖົ້າແກ່ແມ່ຮ່ວມບ້ານ) ແລະ ທ່ານອື່ນໆ.

ຊີ້ນຳໂດຍ

ທ. ກິໂນ່ ຂັນທະມາລີ (Kino KHANHTHAMALY), ທ. ເຄນອິຈິໂຣ ອິວາຕະ (Kenichiro IWATA) ແລະ ທ. ຣຽວເຮ ຢາມາມູໂຣະ (Ryohei YAMAMURO).

ຈັດພິມໂດຍ

ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ, JVC), ທີ່ ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ, ໃນວັນທີ 19 ເດືອນ 03 ປີ 2021.

ໝາຍເຫດ

ປຶ້ມຂໍ້ມູນບ້ານນີ້ເປັນສ່ວນໜຶ່ງຂອງໂຄງການຄ້ຳປະກັນສະບຽງອາຫານຕິດພັນກັບການເຮັດກະສິກຳ ແລະ ບໍລິຫານຊັບພະຍາກອນທຳມະຊາດ (ປີ 2018 ຫາ 2021) ຂອງຄູ່ຮ່ວມງານພາກລັດ ແລະ ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ, JVC).

ຮູບຖ່າຍໃນປຶ້ມນີ້ບໍ່ໄດ້ລະບຸຊື່ຜູ້ທີ່ຖ່າຍ ແຕ່ບັນດາຮູບໃນປຶ້ມນີ້ແມ່ນຖືກຖ່າຍໂດຍອົງການອາສາສະໝັກຍີ່ປຸ່ນ.

ໄຟລ໌ພາບປຶ້ມນີ້ສາມາດດາວໂລດໄດ້ໃນແຫຼ່ງຂໍ້ມູນທາງດ້ານອິນເຕີເນັດໃນ https://www.ngo-jvc.net/en/ourprojects/activities-in-laos/

ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (ເຈວີຊີ, JVC)

ອົງການເຈວີຊີ ແມ່ນອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ໄດ້ສ້າງຕັ້ງຂຶ້ນໃນປີ 1980. ເຈວີຊີມີຈຸດມຸ່ງໝາຍໃນການສ້າງສັງຄົມໃຫ້ມີຄວາມໝັ້ນຄົງ ເພື່ອໃຫ້ມະນຸດກັບທຳມະຊາດຢູ່ຮ່ວມກັນແບບປອງດອງ. ອົງການເຈວີຊີໄດ້ເຮັດກິດຈະກຳຢູ່ ສ.ປ.ປ. ລາວ ນັບແຕ່ປີ 1988, ໃນປະຈຸບັນນີ້ແຕ່ປີ 2020 ໄດ້ຮັບໃບອະນຸຍາດປະຕິບັດວຽກງານ (Operation Permit) No. 133 / AE.OI.3 ຈາກກະຊວງການຕ່າງປະເທດ. ເຈວີຊີໄດ້ເຮັດກິດຈະກຳບໍລິຫານຊັບພະຍາກອນທຳມະຊາດ ແລະ ກະສິກຳ ຢູ່ແຂວງ ສະຫວັນນະເຂດ ຕັ້ງແຕ່ ປີ 2008.

ຕິດຕໍ່: ຫ້ອງການປະຈຳລາວຢູ່ແຂວງ ສະຫວັນນະເຂດ
ທີ່ຢູ່: ໜ່ວຍ 20, ເຮືອນເລກທີ 460, ບ້ານ ໂພນສະຫວັນ, ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ, ສ.ປ.ປ. ລາວ
ເບີໂທ: 041-252-263 / ເຟັກ: 041-252-480
ໄປສະນີ: P.O.Box 876 ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ, ສ.ປ.ປ. ລາວ
ອີເມລ: info@ngo-jvc.net
ແຫຼ່ງຂໍ້ມູນທາງດ້ານອິນເຕີເນັດ: https://www.ngo-jvc.net/en/

ສາລະບານ Table of Contents

ກ່ຽວກັບປຶ້ມຂໍ້ມູນບ້ານ About Village Data Book 2

ກ່ຽວກັບບ້ານ ຍາງ Abstract of Nyang Village 4

1. ປະຫວັດຄວາມເປັນມາຂອງບ້ານ ຍາງ History of Nyang Village 6

2. ສະພາບທົ່ວໄປຂອງບ້ານ ຍາງ General Data on Nyang Village 8

2.1 ທົ່ວໄປ General

2.2 ຊັບພະຍາກອນທຳມະຊາດ Natural Resources

2.3 ກະສິກຳ Agriculture

2.4 ຊີວະນາໆພັນ Biodiversity

2.5 ປະຕິທິນກິດຈະກຳຂອງບ້ານ Calendar of Village

2.6 ຜົນຜະລິດຂອງຊາວບ້ານທີ່ຂາຍ Sold Produce by Villagers

3. ແຜນທີ່ ແລະ ຂໍ້ມູນຈຸດພິກັດGPSຂອງບ້ານ ຍາງ Map and GPS Data of Nyang Village 17

3.1 ແຜນທີ່ສະແດງທີ່ຕັ້ງຂອງບ້ານ ຍາງ Location of Nyang Village

3.2 ແຜນທີ່ເຂດຄຸ້ມຄອງຂອງບ້ານ ຍາງ Boundary Map of Nyang Village

3.3 ແຜນທີ່ເຂດຄຸ້ມຄອງຂອງບ້ານ ຍາງ ແລະ ພາບຖ່າຍອາກາດ Boundary Map of Nyang Village with Aerial Photograph

3.4 ແຜນທີ່ພູມສັນຖານ ແລະ ສາຍນ້ຳຂອງບ້ານ ຍາງ Topography and River Map of Nyang Village

3.5 ແຜນທີ່ການນຳໃຊ້ທີ່ດິນຂອງບ້ານ ຍາງ Land Use Map of Nyang Village

3.6 ແຜນທີ່ເຂດປຸກສ້າງຂອງບ້ານ ຍາງ Residence Map of Nyang Village

3.7 ແຫຼ່ງຂໍ້ມູນຈຸດພິກັດ GPS ສຳລັບເຂດຄຸ້ມຄອງ ແລະ ສະຖານທີ່ສຳຄັນຂອງບ້ານ ຍາງ Source of GPS Data of Boundary and Landmarks of Nyang Village

ກິດຈະກຳຮ່ວມກັບເຈວີຊີ Activity with JVC 26

ເອກະສານອ້າງອີງ Bibliography

ກ່ຽວກັບປຶ້ມຂໍ້ມູນບ້ານ About Village Data Book

ເດືອນ 03 ປີ 2021

ຂຽນໂດຍ: ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ ຫຼື JVC) (ຜູ້ຮັບຜິດຊອບ: ຣຽວເຮ ຢາມາມູໂຣະ)

“ປຶ້ມຂໍ້ມູນບ້ານນີ້ ເປັນສ່ວນໜຶ່ງຂອງໂຄງການຄໍ້າປະກັນສະບຽງອາຫານຕິດພັນກັບການເຮັດກະສິກຳ ແລະ ບໍລິຫານຊັບພະຍາກອນທຳມະຊາດ” ຫຼື “ໂຄງການສະໜັບສະໜູນການບໍລິຫານ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໂດຍປະຊາຊົນທີ່ອາໄສຢູ່ເຂດຊົນນະບົດຂອງແຂວງ ສະຫວັນນະເຂດ”(ປີ 2018-2021), ເຊິ່ງຂຽນໂດຍຊາວບ້ານໃນເຂດເມືອງ ອາດສະພັງທອງ ແລະ ເມືອງ ພິນ, ແຂວງ ສະຫວັນນະເຂດ ຮ່ວມກັບອົງການເຈວີຊີ.

ຢູ່ ສປປ ລາວ ຫຼາຍກ່ວາ 60 ເປີເຊັນຂອງປະຊາກອນອາໄສຢູ່ເຂດຊົນນະບົດ. ຊາວບ້ານໃນເຂດຊົນນະບົດປູກເຂົ້າ ແລະ ພືດຜັກເພື່ອເປັນອາຫານຫຼັກໂດຍການເຮັດນາ ແລະ ເຮັດໄຮ່. ນອກຈາກນັ້ນ, ພວກເຂົາເຈົ້າຍັງເກັບເຄື່ອງປ່າຂອງດົງ ເຊັ່ນ: ເຫັດ, ໜໍ່ໄມ້, ພືດເປັນຢາ, ໄມ້ເພື່ອກໍ່ສ້າງ, ຟືນ, ເຄື່ອຍ້ອມສີ, ລ່າສັດປ່າ, ສັດນ້ຳຈາກປ່າ ຫຼື ສາຍນ້ຳອ້ອມຂ້າງ ເຊັ່ນ: ສັດເລືອຄານ, ໝູປ່າ, ປາ, ກະປູ ແລະ ອື່ນໆເພື່ອໃຊ້ເປັນອາຫານປະຈຳວັນ ບາງຄັ້ງກໍສາມາດແລກປ່ຽນກັບເຂົ້າກິນພ້ອມທັງເປັນແຫຼ່ງລາຍຮັບໃຫ້ເຂົາເຈົ້າ. ເພື່ອໃຫ້ປະຊາຊົນດຳລົງຊີວິດຢ່າງໝັ້ນຄົງ, ການຮັບປະກັນວ່າຊາວບ້ານຈະນຳໃຊ້ ແລະ ປົກປັກຮັກສາປ່າໄມ້ ແລະ ສາຍນ້ຳອັນເປັນພື້ນຖານດຳລົງຊີວິດຂອງເຂົາເຈົ້າ ແມ່ນສິ່ງທີ່ຈຳເປັນໃນການພັດທະນາສັງຄົມແບບຍືນຍົງຂອງ ສປປ ລາວ. ປະຊາຊົນເອງກໍ່ຄວນຈະຄຸ້ມຄອງປ່າໄມ້ ແລະ ສາຍນ້ຳໃກ້ຄຽງເປັນຂອງຕົນເອງຮ່ວມກັບພາກສ່ວນກ່ຽວຂ້ອງ.

ເຖິງຢ່າງໃດກໍ່ຕາມ, ຂໍ້ມູນຂັ້ນບ້ານໃນແຕ່ລະບ້ານເກືອບບໍ່ມີໃຫ້ເຫັນ ເຊັ່ນ: ແຜນທີ່ ຫຼື ເອກສານທີ່ສະແດງຂອບເຂດບ້ານ, ພື້ນທີ່ກະສິກຳ, ປ່າໄມ້, ສາຍນ້ຳ ແລະ ຜົນປະໂຫຍດຈາກສິ່ງດັ່ງກ່າວ. ເຊິ່ງເຮັດໃຫ້ຊາວບ້ານມີຄວາມຫຍຸ້ງຍາກໃນການຮັບມືຕໍ່ການປ່ຽງແປງຂອງສະພາບແວດລ້ອມ ແລະ ຊີວິດການເປັນຢູ່ ເຊັ່ນ: ຫຼາຍພາກສ່ວນບໍ່ສາມາດເຂົ້າໃຈເຖິງຄວາມສຳຄັນຂອງທຳມະຊາດທີ່ມີຕໍ່ຊາວບ້ານ ແລະ ບາງຄັ້ງກໍທຳລາຍສິ່ງແວດລ້ອມ.

ດັ່ງນັ້ນ, ປຶ້ມຂໍ້ມູນບ້ານນີ້ໄດ້ລວບລວມຂໍ້ມູນຕ່າງໆຂອງແຕ່ລະບ້ານອີງໃສ່ຊາວບ້ານຮ່ວມກັບອົງການເຈວີຊີ. ຈຸດປະສົງແມ່ນເພື່ອສະໜັບສະໜູນຊາວບ້ານທີ່ຕ້ອງການຊີວິດການເປັນຢູ່ແບບຍືນຍົງ ແລະ ໝັ້ນຄົງ, ໂດຍທີ່ຄຸ້ມຄອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອ້ອມຂ້າງ. ຂໍ້ມູນເຫຼົ່ານີ້ຄົງຈະຊ່ວຍໃນຫຼາຍດ້ານ ເຊັ່ນ: ປັບບຄວາມເຂົ້າໃຈຂອງຄົນພາຍນອກກ່ຽວກັບສະຖານະການຂອງບ້ານຢ່າງເປັນຮູບປະທຳ, ໃຫ້ຊາວບ້ານເຂົ້າຮ່ວມໂຄງການພັດທະນາ ແລະ ສົນທະນາຢ່າງເຕັມສ່ວນ. ພ້ອມທັງຈະເປັນປະໂຫຍດໃນການຊ່ວຍໃຫ້ຊາວບ້ານພິຈາລະນາວິຖີຊີວິດຂອງຕົນ ເຊັ່ນ: ທຳມະຊາດໃນບ້ານເຂົາເຈົ້າປ່ຽນແປງໄປແນວໃດແນ່.

ພາກທີ 1 ກ່າວເຖິງປະຫວັດຄວາມເປັນມາຂອງບ້ານ, ແບ່ງຕາມປະເພດຂໍ້ມູນ ເຊັ່ນ: ຫົວຂໍ້ທົ່ວໄປຄືຈຳນວນຄົວເຮືອນ, ກະສິກຳ, ປ່າໄມ້ ແລະ ຊີວະນາໆພັນ. ຜູ້ທີ່ອ່ານຈະເຫັນວ່າວິຖີຊີວິດຂອງຊາວບ້ານໄດ້ມີການປ່ຽນແປງແນວໃດ, ຊາວບ້ານໄດ້ຮັບ ແລະ ເສຍຫຍັງມາ, ເຊິ່ງເປັນຂໍ້ມູນສຳຄັນໃນການຄິດເຖິງອະນາຄົດຂອງບ້ານ.

ພາກທີ 2 ກ່າວເຖິງສະພາບທົ່ວໄປຂອງບ້ານໃນປະຈຸບັນ ເຊັ່ນ: ປະຊາກອນ, ກະສິກຳ, ຊັບພະຍາກອນທຳມະຊາດ, ປະຕິທິນກິດຈະກຳຂອງບ້ານ ແລະ ອື່ນໆ. ຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດມີຜະລິດຕະພັນປ່າໄມ້ ຫຼື ຊະນິດພັນປາທີ່ພົບເຫັນໃນບ້ານ. ສິ່ງເຫຼົ່ານີ້ສະແດງເຖິງສ່ວນໜຶ່ງຂອງສະພາບແວດລ້ອມຂອງບ້ານໃນປະຈຸບັນ. ເມື່ອຢາກຮູ້ການປ່ຽນແປງຂອງສະພາບແວດລ້ອມ ຊາວບ້ານສາມາດນຳໃຊ້ຂໍ້ມູນນີ້ປຽບທຽບກັບອະດີດ, ປະຈຸບັນ ແລະ ອະນາຄົດໄດ້.

ພາກທີ 3 ລວບລວມແຜນທີ່ຕ່າງໆ ເພື່ອໃຫ້ຫຼາຍຄົນສາມາດເຂົ້າໃຈຮູບແບບ ແລະ ເນື້ອທີ່ຂອງບ້ານ. ແຜນທີ່ເຫຼົ່ານີ້ສະແດງໃຫ້ເຫັນເຖິງ ຫຼາຍດ້ານ ເຊັ່ນ: ແຜນທີ່ການນຳໃຊ້ທີ່ດິນລວມປ່າໄມ້ ແລະ ແຜນທີ່ພູມສັນຖານ ແລະ ສາຍນ້ຳ ອາດຈະປະກອບສ່ວນເຮັດໃຫ້ໂຄງການພັດທະນາ ແລະ ການປົກປັກຮັກສາສິ່ງແວດລ້ອມຄຳນຶງເຖິງຊີວິດການເປັນຢູ່ ແລະ ສິດທິຂອງປະຊາຊົນທີ່ອາໄສທຳມະຊາດພ້ອມທັງການປ້ອງກັນໄພພິບັດ.

ພາກທີ 4 ບັນທຶກກິດຈະກຳຮ່ວມກັບອົງການເຈວີຊີ.

ປຶ້ມຂໍ້ມູນບ້ານເຫຼັ້ມນີ້ມີພຽງແຕ່ຂໍ້ມູນພື້ນຖານຂອງບ້ານເທົ່ານັ້ນ, ສິ່ງທີ່ສຳຄັນແມ່ນຊາວບ້ານສາມາດເພີ່ມເຕີມຂໍ້ມູນ ແລະ ນຳໃຊ້ເຂົ້າໃນການພັດທະນາບ້ານແບບຍືນຍົງ ແລະ ໝັ້ນຄົງໃນອະນາຄົດ.

About Village Data Book ກ່ຽວກັບປຶ້ມຂໍ້ມູນບ້ານ

March 2021

by: Japan International Volunteer Center (JVC) (Person in Charge: Ryohei YAMAMURO)

This 'Village Data Book' is written as a part of "Project for food security through agriculture and management of natural resources in Savannakhet province in Lao PDR" or "Project for Assisting Management and Use of Natural Resources by Rural Residents in Savannakhet Province" (2018-21), by villagers who seek sustainable lives in Atsaphangtong and Phin district jointly with JVC.

In Lao PDR, more than 60% of the population live in rural areas. They cultivate rice and vegetables as staple foods in paddy or swidden around. They gather natural plants and animals from the surrounding forest and river. For example, mushrooms, bamboo shoots, medicinal herbs, woods as building materials, firewood, dyes, reptiles, wild boars, fish, crabs and so on. They use those natural products as a source of income for purchasing staple rice as well as for daily necessities. Some villagers who cannot feed themselves sometimes exchange the products with rice. For the sustainable development of society in Laos, it is essential to support those people's lives and conserve the nature they use. Villagers should manage and use surrounding forests and rivers independently and in cooperation with various stakeholders.

However, there is little map or textual data about each village in detail, for example the farmlands, forests and rivers that villagers usually use and the benefits they get. This lack sometimes caused difficulty for villager to deal with change of environment. For example, they cannot get understanding of the importance of nature for villager from various stakeholders and then face environmental damage. Therefore, in order to support villagers who seek sustainable lives by managing and using the land and natural resources of around own village, this Village Data Book organizes data gathered by villagers about environment and so on. These can help outsiders accurately grasp the situation of the village and help villagers fully participate in the discussion of any development projects. These data will also be useful when villagers think about the future of their villages. They can see and reflect what kind of life they have had and what kind of nature remains.

Chapter 1 summarizes the history of the village including the data on infrastructure, agriculture, forests and biodiversity. It helps readers know how their lives have changed and what they gained and lost.

Chapter 2 provides a current overview of the village including population, agriculture, natural resources, calendar of the village and so on. Data on forest products and fish species found in the village show the current environment and can be used as an environmental indicator to compare with past and future.

Chapter 3 contains various maps, allowing readers to grasp the shape and area of the village objectively. Land use map of village and topography and river map are expected to be used so that development and environmental protection projects pay careful attention to lives and rights of local people, as well as for disaster prevention. Chapter 4 records the activities with JVC.

The data on this book is only a very basic part of the village. Therefore, it is important that villagers will further enrich and utilize the data for the sustainable development of the village in the future.

ກ່ຽວກັບບ້ານ ຍາງ Abstract of Nyang Village

ເດືອນ 03 ມີນາ ປີ 2021

ຂຽນໂດຍ: ອົງການປົກຄອງບ້ານ ຍາງ ແລະ ອົງການອາສາສະໝັກຍີ່ປຸ່ນ (JVC)

ທີ່ຕັ້ງຂອງບ້ານ ຍາງ

ບ້ານ ຍາງ ຕັ້ງຢູ່ລຽບຕາມແມ່ນ້ຳເຊບັ້ງຫຽງ, ຂຶ້ນກັບ ເມືອງ ພິນ, ແຂວງ ສະຫວັນນະເຂດ, ພູມສັນຖານຂອງບ້ານມີລັກສະນະເຄິ່ງ ທົ່ງພຽງ-ເຄິ່ງພູດອຍ, ມີປ່າໄມ້, ແມ່ນ້ຳ ແລະ ສາຍຫ້ວຍທີ່ອຸດົມສົມບູນ ເຖິງຢ່າງນັ້ນກໍຕາມ, ຄວາມອຸດົມສົມບູນໃນບ້ານກຳລັງມີຄວາມສ່ຽງໃນ ການຫຼຸດລົງ. ເຂດບ້ານຖືກເປັນປ່າສະຫງວນແຫ້ງຊາດດົງພູວຽງ.

ການເດີນທາງເຂົ້າໄປຫາບ້ານຍາງນັ້ນ ເປັນທາງດິນແດງທີ່ມີ ຄວາມຫຍຸ້ງຍາກໂດຍສະເພາະໃນຊ່ວງລະດູຝົນ, ໄລຍະທາງແຕ່ບ້ານ ຍາງ ໄປຫາສຳນັກງານປົກຄອງເມືອງພິນ ຫຼື ທາງປູຢາງທາງຫຼວງແຫ່ງ ຊາດເລກ 9 ແມ່ນ 42 ກິໂລແມັດ ແລະ ໄລຍະທາງແຕ່ບ້ານ ຍາງ ໄປ ຫານະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ ແມ່ນ 202 ກິໂລແມັດ, ຢູ່ທາງທິດຕາເວັນຕົກໄປຕາມທາງຫຼວງແຫ່ງຊາດເລກທີ 9.

ບ້ານຍາງໃນລະດູຝົນ (ປີ 2019)

ເດັກນ້ອຍໄປຫາບ້ຳມາໄວ້ໃຊ້ໃນເຮືອນ (ປີ 2019)

ຊາວບ້ານບ້ານ ຍາງ (ປີ 2019)

ການເດີນທາງດ້ວຍລົດຈາກບ້ານ ຍາງ ໄປຫາ ສະຫວັນນະເຂດ ໃຊ້ເວລາ 4 ຊົ່ວໂມງໃນລະດູແລ້ງ ແລະ ໃຊ້ເວລາຫຼາຍກວ່າ 5 ຊົ່ວໂມງໃນລະດູຝົນ.

ບ້ານ ຍາງ ມີ 4 ໜ່ວຍ, 73 ຫຼັງຄາເຮືອນ, 105 ຄອບຄົວ ແລະ ມີຈຳນວນປະຊາກອນໃນບ້ານທັງໝົດ 459 ຄົນ ຍິງ 225 ຄົນ (ຂໍ້ມູນປີ2018).

ຊົນເຜົ່າ ແລະ ສາສະໜາ

ປະຊາຊົນໃນບ້ານ ຍາງ ເກືອບທັງໝົດແມ່ນສືບ ເຊື້ອສາຍມາຈາກຊົນເຜົ່າ “ບລູ (ເຜົ່າກະຕາງ)” ການສື່ສານພາຍ ໃນບ້ານແມ່ນໃຊ້ພາສາພື້ນເມືອງຂອງເຂົາເຈົ້າເອງ ເຊິ່ງແຕກຕ່າງ ຈາກພາສາທາງການຂອງລາວ. ໃນເມື່ອກ່ອນນັບຖືສາສະໜາຜີ ເປັນຫຼັກ ແຕ່ວ່າໃນຊຸມປີຜ່ານມານີ້ມີສາສະໜາພຸດ ແລະ ສາສະ ໜາຄຣິສຕຽນໄດ້ແຜ່ຂະຫຍາຍເຂົ້າມາໃນບ້ານ.

ປະຫວັດຄວາມເປັນມາຂອງບ້ານ ຍາງ

ໃນອະດີດ ''ບ້ານຍາງ'' ມີຊື່ເອີ້ນວ່າ: ບ້ານ ສີລັງກາ (ສາເຫດທີ່ເອີ້ນວ່າ ບ້ານ ສີລັງກາ ຍ້ອນມີວັດເກົ່າແກ່ຊື່ວ່າ ວັດສີ ລັງກາ) ຕັ້ງຖິ່ນຖານໃກ້ກັບແຄມເຊບັ້ງຫຽງ, ໃນສະໄໝ ສົງຄາມ ຊາວບ້ານແມ່ນກະແຈກກະຈາຍກັນຢູ່ຍ້ອນຫຼີກໜີສົງຄາມ, ແຕ່ ມາຮອດປີ 1973 ລັດຖະບານໄດ້ປະກາດການຍຸດຕິສົງຄາມ (ປະກາດການຢຸດຍິງຢ່າງເປັນທາງການ) ປະຊາຊົນກໍໄດ້ເລີ່ມກັບ ມາຕັ້ງບ້ານໃໝ່ ແລະ ຕັ້ງຊື່ບ້ານວ່າ ບ້ານ ຍາງ, ເຫດຜົນທີ່ຕັ້ງ ຊື່ວ່າບ້ານ ຍາງ ຍ້ອນວ່າໃນສະໄໝນັ້ນຂຶ້ນກັບເຂດຕາແສງຍາງ ໂດຍມີທ່ານ ເຊີຍ ທີ່ມາຈາກບ້ານ ພິນ ມາເປັນຕາແສງຢູ່ບ້ານນັ້ນ , ອີກເລື່ອງເລົ່າໜຶ່ງແມ່ນ ໃນເມື່ອກ່ອນມີຕົ້ນຍາງຫຼາຍ ແລະ ມີ ຕົ້ນຍາງໃຫຍ່ຕົ້ນໜຶ່ງໄດ້ລົ້ມລົງມາ ແລ້ວມີຄົນຈາກບ້ານອື່ນມາ ຊຶ້ນຢູ່ກ້ອງຕົ້ນຍາງໃຫຍ່ນັ້ນ ກໍເລີຍເອີ້ນຊື່ບ້ານ ຍາງ ມາຈົນເຖິງ

ປັດຈຸບັນ.

ຂໍ້ມູນການນຳໃຊ້ທີ່ດິນ

ບ້ານ ຍາງ ມີເນື້ອທີ່ດິນທັງໝົດ 5,410 ເຮັກຕາ, ໂດຍມີດິນນາຈຳນວນ 382 ເຮັກຕາ ແລະ ດິນປູກສ້າງ 05 ເຮັກຕາ (ດັ່ງໃນຮູບ "3.5 ແຜນທີ່ການນຳໃຊ້ທີ່ດິນຂອງບ້ານຍາງ").

ລັກສະນະເຮືອນຂອງຊາວບ້ານ ຍາງ (ປີ 2019)

ວິຖີການດຳລົງຊີວິດ

ປະຊາຊົນບ້ານ ຍາງ ຍັງມີວິຖີການດຳລົງຊີວິດແບບເພິ່ງພາອາໄສທຳມະຊາດຢູ່ ເຊັ່ນ: ເກັບເຄື່ອງປ່າຂອງດົງ, ຫາປາ, ລ່າສັດ ເພື່ອເປັນອາຫານໄປແຕ່ລະມື້, ມີການລ້ຽງສັດ ແລະ ການເຮັດກະສິກຳແຕ່ຍັງບໍ່ທັນມີລັກສະນະກວ້າງຂວາງຍ້ອນວ່າປະລິມານຂອງຜົນຜະລິດ ແລະ ຄຸນນະພາບຂອງການເຮັດກະສິກຳນັ້ນ ແມ່ນຕ້ອງອີງຕາມຄວາມເອື້ອອຳນວຍທາງດ້ານສະພາບຝົນຟ້າອາກາດຈາກທຳມະຊາດ ແຕ່ກໍມີຫຼາຍຫຼັງຄາເຮືອນທີ່ນຳໃຊ້ປຸຍເຄມີເຂົ້າມາຊ່ວຍ. ທາງດ້ານວັດທະນະທຳການຕັ້ງເຮືອນຢູ່ອາໄສນັ້ນ ສ່ວນຫຼາຍແມ່ນເປັນເຮືອນໄມ້ຍົກສູງ ແລະ ມີກ້ອງຕະລ່ຽງເຮືອນໄວ້ໃຊ້ປະໂຫຍດ.

ເພື່ອຊີວິດການເປັນຢູ່ຂອງຊາວບ້ານທີ່ແບບກຸ້ມຕົນເອງ ແລະ ໝັ້ນຄົງ

ດັ່ງທີ່ຮູ້ນຳກັນແລ້ວວ່າອາຊີບຫຼັກຂອງຊາວບ້ານແມ່ນການປູກເຂົ້າເພື່ອລ້ຽງຊີບກຸ້ມຕົນເອງ ແລະ ອາໄສທຳມະຊາດ. ນັບແຕ່ຊຸມປີ 2000 ມານີ້ປ່າໄມ້ທຳມະຊາດໄດ້ມີການຫລຸດລົງ ເຊິ່ງເຮັດໃຫ້ບາງສັດປ່າບາງຊະນິດເລີ່ມສູນພັນ. ເມື່ອກ່ອນເຄີຍມີຄວາມອຸດົມສົມບູນ: ຫຼິ່ນ ແລະ ອື່ນໆ. ສະພາບແວດລ້ອມກໍ່ອາດຈະມີການປ່ຽງແປງ ເຊັ່ນ: ປີ 2019-2020 ບ້ານໄດ້ປະສົບໄພພິບັດນ້ຳຖ້ວມ (ນ້ຳຖ້ວມຂັງ), ເຂົ້າໃນເລົ້າ ແລະ ທົ່ງນາເສຍຫາຍເປັນຈຳນວນຫຼາຍເຮັດໃຫ້ຫຼາຍຄອບຄົວອຶດເຂົ້າກິນ. ພ້ອມກັບນັ້ນການເຮັດກະສິກຳມີການນຳໃຊ້ປຸຍເຄມີຫຼາຍຂຶ້ນອາດຈະສົ່ງຜົນກະທົບຕໍ່ສຸຂະພາບຂອງສັດນ້ຳ, ສັດປ່າ, ສັດລ້ຽງ, ມະນຸດ ແລະ ເຮັດໃຫ້ອາຫານທຳມະຊາດບໍ່ໝັ້ນຄົງ.

ປະຊາຊົນຈຳນວນໜຶ່ງ ໄດ້ອອກໄປເຮັດວຽກຕ່າງເມືອງ ແລະ ປະເທດໄທເພື່ອຫາລາຍຮັບ ເຊິ່ງເປັນການປ່ຽນແປງຊີວິດການເປັນຢູ່, ແຕ່ໂດຍທົ່ວໄປແລ້ວມີຄວາມສ່ຽງ ອີງໃສ່ສະພາບເສດຖະກິດ ແລະ ສັງຄົມ ເຊັ່ນ: ການລະບາດຂອງພະຍາດ ໂຄວິດ-19 ເຮັດໃຫ້ສະພາບເສດຖະກິດປ່ຽນແປງ ປະຊາຊົນອາດຈະສູນເສຍແຫຼ່ງລາຍຮັບ.

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດຄັ້ງທີ VIII (2016-2020) ໄດ້ກ່າວວ່າ ການເຕີບໂຕຂອງເສດຖະກິດສ່ວນໃຫຍ່ຍັງອີງໃສ່ການຂຸດຄົ້ນແຫຼ່ງຊັບພະຍາກອນທຳມະຊາດ, ແຕ່ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃນຫຼາຍກໍລະນີຍັງມີລັກສະນະບໍ່ຍືນຍົງ, ມີການນຳໃຊ້ແບບຟຸມເຟືອຍ ແລະ ບໍ່ເປັນມິດຕໍ່ສິ່ງແວດລ້ອມ ເຊິ່ງບັນຫາດັ່ງກ່າວໄດ້ສ້າງຜົນຮ້າຍໃຫ້ແກ່ປະຊາຊົນເຮົາໃນຫລາຍທ້ອງຖິ່ນມາແລ້ວ[1].

ເຖິງຢ່າງໄດ້ກໍ່ຕາມ, ຊາວບ້ານສ່ວນໃຫຍ່ຍັງດຳລົງຊີວິດແບບເຮັດກະສິກຳກຸ້ມຕົນເອງ, ຊາວບ້ານຫຼາຍຄົນຍັງອາໄສຊອກຫາອາຫານຈາກທຳມະຊາດທີ່ຍັງເປັນອຸດົມສົມບູນ, ອາໄສຊັບພະຍາກອນທຳມະຊາດຊ່ວຍຄອບຄົວທີ່ບໍ່ກຸ້ມກິນ. ເພື່ອບໍ່ໃຫ້ວິຖີຊີວິດຂອງຊາວບ້ານຖືກທຳລາຍໂດຍການສູນເສຍຊັບພະຍາກອນທຳມະຊາດ ແລະ ຜົນເສຍຫາຍທີ່ເກີດຈາກໄພພິບັດ ເຊັ່ນ: ນ້ຳຖ້ວມ ແລະ ແຫ້ງແລ້ງ ຊາວບ້ານຕ້ອງມີການປ້ອງກັນ, ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາການທຳມະຊາດຢ່າງເປັນລະບົບດ້ວຍຕົນເອງ, ເຮັດກະສິກຳທີ່ບໍ່ມີຜົນກະທົບຕໍ່ທີ່ດິນ, ສາຍນ້ຳ ແລະ ປ່າໄມ້. ກິດຈະກຳຂອງປະຊາຊົນແບບນີ້ມີຄວາມສຳຄັນໃນການຮັບປະກັນການທຳມາຫາກິນ ແລະ ຄົງຈະເຮັດໃຫ້ຊີວິດການເປັນຢູ່ຂອງຊາວບ້ານມີຄວາມໝັ້ນຄົງ.

ເຂົ້ານາຕາຍຖືກນ້ຳຖ້ວມ (ເດືອນ 9 ປີ 2019)

[1] ກະຊວງແຜນການ ແລະ ການລົງທຶນ, 2016: ໜ້າທີ 64.

1. ປະຫວັດຄວາມເປັນມາຂອງບ້ານ ຍາງ History of Nyang Village ”

ສຳຫຼວດວັນທີ 30 ເດືອນ 8 ປີ 2018 ຫາວັນທີ 10 ເດືອນ 02 ປີ 2021

ຜູ້ທີ່ສະໜອງຂໍ້ມູນ: ທ. ບຸນກົ່ງ ໄຊຍະວົງ(ນາຍບ້ານ), ທ. ຄຳບົ່ງ (ຮອງນາຍບ້ານ), ທ. ຄຳປານ (ຮອງນາຍບ້ານ), ທ. ອາຍັນ (ກອງຫຼວນບ້ານ), ທ. ຕຸ້ຍ (ກອງຫຼວນ), ທ. ອາດາວ ພິມມະຊັກ (ປ້ອງກັນບ້ານ), ທ. ກາດານ ສົມບັດ (ເຖົ້າແກ່ແມ່ບ້ານ), ທ. ບຸນກອງ (ຮາກຖານ/ເຂດ), ທ. ດ□ າ (ຊາວໜຸ່ມບ້ານ), ທ. ຄຳພິນ (ປກຊ), ທ. ອາປານ (ປກຊ), ທ ອາ ທາວ (ປກສ) ແລະ ທ່ານອື່ນໆ.

ປີ	ນາຍບ້ານ	ການເມືອງ,ເສດຖະກິດ,ພັດທະນາຊີວິດການເປັນຢູ່ຂອງບ້ານ	ກະສິກຳ	ປ່າໄມ້	ຊີວະນາໆພັນ
1964-1970	**ທ່ານ ບຸນກອງ**	ຍັງຢູ່ໃນຊ່ວງສົງຄາມ ແລະ ໃນບ້ານມີປະຊາຊົນອາໃສຢູ່ພຽງແຕ່ 10 ຫຼັງຄາເຮືອນ.			
1970-1980	**ທ່ານ ທອງໄລ**	ມີປະຊາຊົນອາໃສຢູ່ 12 ຫຼັງຄາເຮືອນ, ສ່ວນຫຼາຍເປັນເຮືອນຫຼັງນ້ອຍ, ມຸງຫຍ້າ, ແອ້ມຝາ ໃບຕອງ ແລະ ຍັງຂາດແຄນເຄື່ອງນຸ່ງຂອງຖື.	ການເຮັດໄຮ່ນາແມ່ນ ຍັງມີໜ້ອຍເນື່ອງຈາກ ສົງຄາມ, ບາງຄອບຄົວ ມີສັດລ້ຽງປະເພດງົວ ຄວາຍປະມານ 20 ຫາ 30 ໂຕ.		
1980-1990	**ທ່ານ ສົມບູນ**	ມີປະຊາຊົນອາໃສຢູ່ 18 ຫຼັງຄາເຮືອນ; ເຮືອນຫຼັງນ້ອຍ, ມຸງຫຍ້າ, ແອ້ມຝາໃບຕອງ ແລະ ສະພາບບ້ານຍັງບໍ່ທັນເປັນລະບຽບ			
1990-1993	**ທ່ານ ບຸນທອນ**	ມີປະຊາຊົນອາໃສຢູ່ 20 ຫຼັງຄາເຮືອນ, ເລີ່ມມີນ້ຳບາດານ ແລະ ມີລົດຖີບຄັນທຳອິດທີ່ເປັນ ຂອງທ້າວ ອາທາວ ເຊິ່ງໄດ້ມາໂດຍການແລກປ່ຽນກັບງົວ 1 ໂຕ; ໃນເຂດນັ້ນມີໂຮງສີ ເຂົ້າຂອງທ້າວ ອາທາວ, ລົດໄຖຄັນທຳອິດກໍແມ່ນຂອງທ້າວ ອາທາວ ໄດ້ມາດ້ວຍການແລກ ກັບງົວ 10 ໂຕ ແລະ ຄວາຍ 2 ໂຕ, ເປັນເຈົ້າຂອງເຮືອຈັກລຳທຳອິດ ໄດ້ມາດ້ວຍການ ແລກກັບຄວາຍ 1 ໂຕ. ຊາວບ້ານເລີ່ມມີການໄປຮັບຈ້າງທາງນອກ ຫຼື ໄປເຮັດວຽກຢູ່ໄທ ແບບບໍ່ມີເອກະສານ.	ງົວ-ຄວາຍເລີ່ມເປັນ ລາຄາ, ແລກປ່ຽນຊື້-ຂາຍດ້ວຍເງິນຮາງ (ເງິນຫຼຽນ)		ສັດປ່າທີ່ເປັນລາຄາ ແມ່ນຫຼີ່ນ ທີ່ມີຄົນມາ ຮັບຊື້ເກັດຂອງມັນ
1993-1996	**ທ່ານ ບົວລີ**	ມີປະຊາຊົນອາໃສຢູ່ 25 ຫຼັງຄາເຮືອນ.	ບາງຄອບຄົວເຮັດນາ ແຕ່ບໍ່ກຸ້ມກິນ; ນຳໃຊ້ ແມວພັນເຂົ້າພື້ນເມືອງ , ນຳໃຊ້ປຸຍຄອກເຂົ້າ ໃນການຜະລິດ.		ສັດປ່າ: ຟານ, ໄກ່ປ່າ, ໄກ້, ຫາງຽນ, ລີງ, ກວາງ , ໝູປ່າ ແລະ ອື່ນໆ. ສັດນ້ຳ: ປາເອິນ, ປາຄູນ , ປາເຄິ ແລະ ແຂ້. ນຳເອົາສັດປ່າໄປແລກ ເຂົ້າຈາກພີ່ນ້ອງໃນເມືອງ ພິນ

1996-1999	**ທ່ານ ອາບຸນ**	ມີປະຊາຊົນອາໃສຢູ່ປະມານ 30 ຫຼັງຄາເຮືອນ, ຍັງບໍ່ມີເສັ້ນທາງ, ເລື່ອຍໄມ້ດ້ວຍມື, ມີ ໂຮງຮຽນມຸນລະປະຖົມແຕ່ ປໍ 1-ປໍ 3.			
1999-2009	**ທ່ານ ຄຳບານ**	ມີປະຊາຊົນອາໃສຢູ່ 45 ຫຼັງຄາເຮືອນ, ເລີ່ມມີໂທລະທັດຂອງ ທ. ກອງມາ ແລະ ທ. ດອກຈານ, ເລີ່ມມີໄຟຟ້າ, ມີການຕີເຫຼັກ. ອົງການຊີດາເຂົ້າມາໃຫ້ການຊ່ວຍເຫຼືອລວມມີ: ສາງເຂົ້າ, ສ້າງເສັ້ນທາງລະຫວ່າງບ້ານຕໍ່ບ້ານບຸກເບີກນາ 05 ຄອບຄົວ (0,5ເຮັກຕ່າຕໍ່ຄອບຄົວ), ໝອງປາ 3 ຄອບຄົວ, ວິດຖ່າຍ 10 ແຫ່ງ, ນ້ຳບາດານ 4 ບໍ່ ແລະ ສ້າງໂຮງຮຽນປະຖົມແຕ່ ປໍ 1 - ປໍ 5.			ສັດນ້ຳ: ປາເຄີງ, ປາເພ້ຍ ປາໄນ, ປາເອີນ.. ສັດປ່າຍັງມີຫຼາຍ: ໝູປ່າ, ຟານ, ກວາງ, ລິງ, ຕະຫຼູງ...
2009-2012	**ທ່ານ ຄຳບິງ**	ມີປະຊາຊົນອາໃສຢູ່ 60 ຫຼັງຄາເຮືອນ, ນ້ຳບາດານ 4 ຫົວ, ເລີ່ມມີເຮືອນຫຼັງໃຫຍ່, ອົງການສຸພານິມິດຊ່ວຍເຫຼືອກອງທຶນບ້ານຈຳນວນ 10 ລ້ານກີບ ແລະ ຕູ້ຢາປະຈຳບ້ານ; ໄດ້ຈັກປັ່ນເຂົ້າກ່ອນໝູ່ແມ່ນ ທ້າວ ສີໂຄດ ປີ 2010			
2012-2014	**ທ່ານ ຄຳສະຫຼີ**	ມີປະຊາຊົນອາໃສຢູ່ 65 ຫຼັງຄາເຮືອນ, ປີ 2013 ມີເຮືອນກໍ່ຂອງ ທ້າວ ອາທາວ, ທ້າວ ຂຸນຕາ, ທ້າວ ກອງມາ ແລະ ທ້າວ ດອກຈານ, ມີໂຄງການອາຫານທ່ຽງເດັກຂອງ CRS.	ເຮັດກະສິກຳ ແລະ ນຳ ໃຊ້ປຸ້ຍເຄມີ, ໃຊ້ແນວ ພັນເຂົ້າຈາກທ່າສະໂນ	ປ່າໄມ້ຍັງຫຼາຍ (ໄມ້ຍາງ, ໄມ້ຂະຍູງ, ແລະ ໄມ້ດູ່ເລີ່ມຖືກ ຕັດ)	ສັດປ່າຍັງຫຼາຍແມ່ນ: ກວາງ, ຟານ, ລິງ... ສັດນ້ຳຍັງຫຼາຍແມ່ນ: ປາ ຊ້ອຍ, ປາເຄີງ, ປາເອີນ ...
2014-	**ທ່ານ ບຸນກີ່ງ** 	ມີປະຊາຊົນອາໃສຢູ່ປະມານ 73 ຫຼັງຄາເຮືອນ, ປະຊາກອນ 427 ຄົນ, ຍິງ 223, ຊາຍ 204. ປົວແປງເສັ້ນທາງລະຫວ່າງບ້ານຕໍ່ບ້ານຈຳນວນ 2 ຄັ້ງ, ສ້າງທາງເຂົ້າບ້ານ ໂດຍ ໂຄງການ ທລຍ, ສ້ອມແປງທາງໄປຈຸດສຸມ, ສ້າງຕັ້ງບ້ານພັກຄູຈຳນວນ 1 ຫຼັງ, ສ້ອມແປງ ໂຮງຮຽນ 3 ຄັ້ງ. ໄດ້ຮ່ວມກັບອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ) ຕັ້ງແຕ່ປີ 2018 ແລະ ໄດ້ສຳຫຼວດຂອບ ເຂດຊາຍແດນບ້ານກັບບ້ານອ້ອມຂ້າງ. ປີ 2019 ມີເຫດການນ້ຳຖ້ວມບ້ານຄັ້ງໃຫຍ່ຂຶ້ນໃນຊ່ວງເດືອນ 9 ໂດຍນ້ຳໄດ້ຖ້ວມຂັງ ແລະ ແກ່ຍາວເວລາເປັນອາທິດກວ່ານ້ຳຈະລົດລົງ, ເຊິ່ງໄດ້ສ້າງຄວາມເສຍຫາຍຢ່າງ ຫຼວງຫຼາຍແກ່ຊັບສິນເປັນຕົ້ນແມ່ນເຂົ້າໃນນາ ແລະ ໃນເລົ້າ, ກະທົບຕໍ່ຊີວິດການເປັນຢູ່ ຊາວບ້ານ. ມີໂຄງການ PAKO ຈັດສັນປ່າສະຫງວນດົງພູວຽງ ໃນປີ 2020 ອົງການ WWF ໄດ້ສ້າງຕັ້ງວັງສະຫງວນ ໃນບໍລິເວນວັງລະເປີງນາງ ໃນປີ 2020 ໄດ້ເກີດໄພແຫ້ງແລ້ງຂຶ້ນໃນຊ່ວງເດືອນ 04 ຫາເດືອນ 07 ເຮັດໃຫ້ເຂົ້ານາ ຕາຍຍ້ອນຂາດນ້ຳ, ຫຼັງຈາກນັ້ນໄດ້ມີເຫດການນ້ຳຖ້ວມເຖິງ 2 ຄັ້ງໃນຊ່ວງເດືອນ 9 ຫາ ເດືອນ 10 ຄວາມເສຍຫາຍຂອງເຫດການຄັ້ງນີ້ແມ່ນທຽບເທົ່າກັບປີ 2019. ສະຫຼຸບຂໍ້ມູນບ້ານຕ່າງໆເປັນປື້ມຂໍ້ມູນບ້ານສະບັບນີ້ຮ່ວມກັບເຈວີຊີ ໃນປີ 2021.	ການກະສິກຳແມ່ນນຳ ໃຊ້ເຄື່ອງກົນຈັກແທນ ສັດທຸກຄອບຄົວ	ປູກເບ້ຍໄມ້ຈຳນວນ 13,202 ຕົ້ນໃນ ຂອບເຂດປ່າ ສະຫງວນດົງພູວຽງ ເຊິ່ງໄດ້ຮັບເບ້ຍໄມ້ ມາຈາກຫ້ອງການກະ ຊີກຳ-ປ່າໄມ້ເມືອງ ພິນ	ສັດນ້ຳ: ປາເຄີງ, ປາເພ້ຍ , ປາຝາໄລ, ແຂ້... ສັດປ່າ: ເໝັ້ນ, ເຫງັນ, ລິງ, ແລນ, ໝູປ່າ, ຟານ, ກວາງ (ຍັງບໍ່ຫຼາຍ).

2. ສະພາບທົ່ວໄປຂອງບ້ານ ຍາງ General Data on Nyang Village

ສຳຫຼວດ: ວັນທີ 09 ເດືອນ 08 ປີ 2018 ຫາວັນທີ 10 ເດືອນ 02 ປີ 2021

ຜູ້ທີ່ສະໜອງຂໍ້ມູນ: ທ. ບຸນກົ່ງ ໄຊຍະວົງ (ນາຍບ້ານ), ທ. ບຸນກອງ (ຮາກຖານ), ທ. ຄຳປານ (ຮອງນາຍບ້ານ2), ທ. ຈັນທະລາ (ຫົວໜ້າໜ່ວຍ3), ທ. ຄຳພົນ (ປກຊ), ທ. ສີວັນ (ຫົວໜ້າໜ່ວຍ 4/ປກຊ), ທ. ທອງດຳ (ຫົວໜ້າໜ່ວຍ2), ທ. ຄຳບົ່ງ (ຮອງນາຍບ້ານ1) ແລະ ທ່ານ ອື່ນໆ.

2.1 ທົ່ວໄປ General

◆ **<u>ທີ່ຢູ່, ໄລຍະທາງຫາບ່ອນຕ່າງໆ ແລະ ບ້ານຕິດຈອດ</u>**

◇ ບ້ານ ຍາງ ຂຶ້ນກັບກຸ່ມບ້ານທີ 13 ກຸ່ມບ້ານ ຍາງ, ເມືອງ ພິນ, ແຂວງ ສະຫວັນນະເຂດ.

◇ ເນື້ອທີ່ຂອບເຂດຂອງບ້ານ (ດັ່ງທີ່ຮູບ 3.5“ແຜນທີ່ສະແດງທີ່ຕັ້ງຂອງບ້ານ ຍາງ).

- ເນື້ອທີ່ທັງໝົດ 54,1 ກິໂລຕາແມັດ (5.410 ເຮັກຕາ);
- ເນື້ອທີ່ນາ 3,8 ກິໂລຕາແມັດ (382 ເຮັກຕາ);
- ເນື້ອທີ່ເຂດປຸກສ້າງ 0,05 ກິໂລຕາແມັດ (5 ເຮັກຕາ).

◇ ໄລຍະທາງຈາກບ້ານ (ດັ່ງທີ່ຮູບ 3.1“ແຜນທີ່ສະແດງທີ່ຕັ້ງຂອງບ້ານ ຍາງ).

- ຕະຫຼາດຈຸດສຸມຫ້ວຍຫອຍ-ທຸ່ນຂາມ-ຍາງ	11 ກິໂລແມັດ (ທິດເໜືອ)
- ທາງປູຢາງຫຼວງແຫ່ງຊາດເລກ 9 ແລະ ຫ້ອງວ່າການເມືອງ ພິນ	42 ກິໂລແມັດ (ທິດເໜືອ)
- ແດນສະຫວັນ (ຊາຍແດນກັບປະເທດ ຫວຽດ)	122 ກິໂລແມັດ (ທິດຕາເວັນອອກສຽງເໜືອ)
- ສະຫວັນນະເຂດ (ນະຄອນ ໄກສອນພົມວິຫານ)	202 ກິໂລແມັດ (ທິດຕາເວັນຕົກ)
- ນະຄອນຫຼວງວຽງຈັນ	607 ກິໂລແມັດ (ທິດຕາເວັນຕົກສຽງເໜືອ)

ການເດີນທາງເຂົ້າບ້ານ ຍາງ ໃນລະດູຝົນ (ປີ 2019)

◆ **<u>ບ້ານຕິດຈອດ:</u>**

ບ້ານ ຍາງ ມີຂອບເຂດຊາຍແດນຕິດຈອດກັນ 04 ບ້ານ.

◇ ທິດເໜືອຕິດກັບບ້ານ ວົງສີແກ້ວ: ເລີ່ມຈາກກົກໄມ້ຮັງດິນປ່າລວມ, ຕັດໃສ່ກົກໄມ້ຈິກດິນນາທ້າວ ທອງມາ, ຕັດໃສ່ກົກໄມ້ແດງດິນນາທ້າວ ອາປານ, ຕັດໃສ່ກົກໄມ້ເຫຼືອງດິນນາທ້າວ ຄຳພົນ, ຕັດໃສ່ກົກໄມ້ຊາດດິນປ່າລວມ, ເລາະຕາມຫ້ວຍຕັດໃສ່ກົກໄມ້ແດງດິນປ່າລວມ, ຕັດໄປໃສ່ກົກເປືອຍດິນປ່າລວມ, ຕັດໃສ່ກົກໄມ້ດູ່ນ້ອຍດິນປ່າລວມ (ເຂດແດນສາມບ້ານໆ ຍາງ, ບ້ານ ນາຫຼັງຄຳ ແລະ ບ້ານວົງສີແກ້ວ), ສຸດເຂດແດນລະຫວ່າງບ້ານຍາງ ແລະ ບ້ານ ວົງສີແກ້ວ ລວມໄລຍະທາງທັງໝົດປະມານ 09 ກິໂລແມັດ.

◇ ທິດຕາເວັນຕົກຕິດກັບບ້ານ ນາຫຼັງຄຳ: ເລີ່ມຈາກກົກໄມ້ດູ່ນ້ອຍດິນປ່າລວມແຄມຫ້ວຍຫຼັງຄຳ ແລ້ວເລາະຕາມຫ້ວຍລົງໄປຈົນຮອດປາກຫ້ວຍຫຼັງຄຳປ່ອງໃສ່ເຊບັ້ງຫຽງ ສຸດເປັນເຂດແດນລະຫວ່າງບ້ານ ຍາງ ແລະ ບ້ານ ນາງຫຼັງຄຳ ລວມໄລຍະທາງທັງໝົດປະມານ 8,5 ກິໂລແມັດ

◇ ທິດໃຕ້ຕິດກັບ ບ້ານ ປະສົດ: ເລີ່ມແຕ່ປາກຫ້ວຍຫຼັງຄຳເຂດພູສີດິນປ່າລວມແຄມເຊບັ້ງຫຽງ, ຕັດໃສ່ດານຫີນດິນປ່າລວມ, ຕັດໃສ່ເຂດຫ້ວຍອາຕຶງດິນປ່າລວມ, ຕັດໃສ່ເຂດຫົວແກ້ງລະເປິງນາງ, ຕັດຜ່ານເຊບັ້ງຫຽງບໍລິເວນກົກໝາກ່ວງດິນນາທ້າວ

ວິໄຊ, ຕັດໃສ່ກົກໄມ້ແດງເຂດຫ້ວຍຕົງ, ຕັດໃສ່ກົກໄມ້ຊາດດິນສອນທ້າວ ອາປານ, ຫ້ວຍແສນ ກົກໄມ້ຊາດແຄມນາທ້າວ ອາມາງ ສຸດເຂດແດນລະຫວ່າງບ້ານ ຍາງ ແລະ ບ້ານ ປະສົດ ລວມໄລຍະທາງທັງໝົດປະມານ 16 ກິໂລແມັດ.

◇ ທິດຕາເວັນອອກຕິດກັບບ້ານ ອາເລົ່າໃໝ່: ເລີ່ມຈາກກົກໄມ້ຊາດແຄມນາທ້າວ ອາມາງ ເລາະຕາມຫ້ວຍແສນຂຶ້ນໄປຮອດກົກໄມ້ແດງດິນສອນທ້າວ ອາພັດ, ຕັດໃສ່ກົກຂາມດິນນາທ້າວ ກໍ້, ຕັດໃສ່ກົກມ່ອງປ່າດິນນາທ້າວ ຄຳເງິນ, ຕັດໃສ່ກົກໄມ້ແດງດິນສອນທ້າວ ອານຸ, ຕັດໃສ່, ກົກໄມ້ຮັງດິນປ່າລວມ ສຸດເຂດແດນລະຫວ່າງບ້ານຍາງ ແລະ ບ້ານ ອາເລົ່າໃໝ່ ລວມໄລຍະທາງທັງໝົດປະມານ 1,5 ກິໂລແມັດ.

ການສຶກສາແບ່ງເຂດແດນລະຫວ່າງອີງການຈັດຕັ້ງບ້ານ ຍາງ ແລະ ບ້ານວົງສີແກ້ວ (ປີ 2019)

◆ **<u>ຄຸ້ມບ້ານ, ຈຳນວນປະຊາກອນ ແລະ ຄົວເຮືອນ</u>**

- ບ້ານ ຍາງ ແບ່ງໜ່ວຍຄຸ້ມຄອງອອກເປັນ 4 ໜ່ວຍ, 73 ຫຼັງຄາ, 105 ຄອບຄົວ, ມີຈຳນວນປະຊາກອນໃນບ້ານທັງໝົດ 459 ຄົນ, ຍິງ 225 ຄົນ (ຂໍ້ມູນປີ 2018).

◆ **<u>ຊົນເຜົ່າ, ສາສະໜາ, ອາຊີບຫຼັກ ແລະ ແຫຼ່ງລາຍຮັບ</u>**

- ຊາວບ້ານສ່ວນຫຼາຍເປັນຊົນເຜົ່າກະຕ່າງ (ບລູ), ໃຊ້ພາສາ ”ບລູ” ໃນການສື່ສານກັນພາຍໃນບ້ານ, ຊາວບ້ານສ່ວນຫຼາຍນັບຖືສາສະໜາຜີແບບດັ້ງເດີມ, ມີບາງຄົນນັບຖືສາດສະໜາຄຣິສຕຽນ ແລະ ບາງຄົນເປັນຊົນເຜົ່າລາວລຸ່ມນັບຖືສາດສະໜາພຸດ.
- ອາຊີບຫຼັກແມ່ນເຮັດນາ, ປູກຝັງ, ລ້ຽງສັດ, ຈັກສານ, ຕຳຫູກ, ປູກສາລີ, ມັນຕົ້ນ ແລະ ອື່ນໆຕາມແຄມເຊ. ມີບາງຄອບຄົວຫາປາຂາຍໂດຍການໃສ່ເບັດ ແລະ ໃສ່ມອງ.
- ແຫຼ່ງລາຍຮັບຂອງຊາວບ້ານແມ່ນອາໃສການຂາຍສັດລ້ຽງ, ຫາສັດປ່າ, ສັດນ້ຳ ແລະ ເຄື່ອງປ່າຂອງດົງຂາຍ ເປັນຕົ້ນແມ່ນ: ງົວ, ຄວາຍ, ເປັດ, ໄກ່, ປາ, ຈີ່ຫຼໍ່, ເຫັດ, ແລະ ອື່ນໆ. ນອກຈາກນັ້ນ, ຍັງມີການຕຳສີ້ນ ແລະ ແພຕາໂລ້ຂາຍ.

◆ **<u>ລາຍຊື່ອົງການຈັດຕັ້ງບ້ານ, ອາສາສະໝັກບ້ານ ແລະ ຄະນະພັດທະນາບ້ານ</u>**

- ນາຍບ້ານ: ທ. ບຸນກົ່ງ ໄຊຍະວົງ, ເປັນນາຍບ້ານຕັ້ງແຕ່ປີ 2014
- ຮອງນາຍບ້ານ 1: ທ. ຄຳບົ່ງ ພົມມະຈັກ (ທັງເປັນຮອງແນວໂຮມບ້ານ)
- ຮອງນາຍບ້ານ 2: ທ. ຄຳບານ ສົມບັດອຸທອນ
- ຮອງນາຍບ້ານ 3: ນ. ແດນ (ຄະນະບ້ານ/ສະຫະພັນແມ່ຍິງ)
- ຫົວໜ້າຊາວໜຸ່ມ: ທ. ດຳ
- ຫົວໜ້າ ປກສ: ທ. ຕາເບີ່ນ, ທ. ອາທາວ
- ຫົວໜ້າ ປກຊ: ທ. ທະນົງສັກ
- ສັດຕະວະແພດບ້ານ: ທ. ອາທາວ
- ໝໍຕຳແຍ: ນ. ນຸ້ນ
- ສ້ອມແປງນ້ຳບາດານ: ທ. ແກ້ວ ແລະ ທ. ສີໂຄດ (ຜ່ານມາບໍ່ໄດ້ເຄື່ອນໄຫວຍ້ອນບໍ່ມີເຄື່ອງມື)
- ອາສາສະໝັກບ້ານ: ທ. ດອກຈານ ອຳເພຍທິວະ (ທັງເປັນແນວໂຮມ ແລະ ກຳມະການບ້ານ)

◆ **<u>ໂຄງການຊ່ວຍເຫຼືອຜ່ານມາ</u>**

- ອົງການຊິດາ: ປີ 1994-1995 ໄດ້ໃຫ້ງົວ 10 ໂຕ, ຄວາຍ 10 ໂຕ, ນ້ຳບາດານ 1 ບໍ່ ແລະ ໜອງປາ 3 ໜອງ, ປີ 2003 ຫາ 2004 ໄດ້ສ້າງຫົນທາງໄປຫາຈຸດສຸມໄລຍະທາງ 9 ກິໂລແມັດ, ເຈາະນ້ຳບາດານໃນບ້ານເພີ່ມລວມເປັນ 6 ບໍ່, ສ້າງວິດຖ່າຍ 6 ແຫ່ງ, ຂຸດໜອງປາລວມ 1 ໜອງ ແລະ ຍັງໄດ້ມອບງົວ, ຄວາຍ, ແບ້ໃຫ້ອີກຈຳນວນໜຶ່ງ. ຕໍ່ມາປີ 2011-2012 ໄດ້ມາຊ່ວຍສ້າງໂຮງຮຽນຮອດປໍ 3 ມູນຄ່າ 289,270,645 ກີບ.
- ອົງການ ທລຍ: ປີ 2003-2004 ຊ່ວຍເຈາະນ້ຳບາດານ 3 ບໍ່, ສ້າງຫົນທາງໄປນາຫຼັງຄຳໄລຍະທາງ 9 ກິໂລແມັດ.

- ອົງການສຸພານິມິດ: ເຂົ້າມາປີ 2004-2005 ໄດ້ເຈາະນ້ຳບາດານໃຫ້ 4 ບໍ່, ມອບແບ້ໃຫ້ 20 ໂຕ ແລະ ສ້າງວິດຖ່າຍໃຫ້.
- ໂຄງການປ່າໂຄກ PAKO: ປີ 2018-2022 ສົ່ງເສີມການປູກໄມ້ ແລະ ການທ່ອງທ່ຽວ ເພື່ອເປັນກົດຈະກຳໃນປ່າສະຫງວນແຫ່ງຊາດດົງພູວຽງ.
- ອົງການກອງທຶນອະນຸລັກສັດປ່າສັດນ້ຳ WWF: ປີ 2019 ສ້າງວັງສະຫງວນຢູ່ແມ່ນ້ຳເຊບັ້ງຫຽງໃນບໍລິເວນວັງລະເປັງນາງ.

◆ **<u>ສາຍນ້ຳ</u>**

- ມີແມ່ນ້ຳເຊບັ້ງຫຽງເປັນແມ່ນ້ຳທີ່ໃຫຍ່ທີ່ສຸດໃນບ້ານ (ມີວັງສະຫງວນລະເປັງນາງ), ຫ້ວຍອະຕຶງ, ຫ້ວຍເຊັນ, ຫ້ວຍຕ້ອນ, ຫ້ວຍແສນພັນ, ຫ້ວຍວັງ, ຫ້ວຍຫຼັງຄຳ, ຫ້ວຍບຸນ (ດັ່ງໃນຮູບ "3.4 ແຜນທີ່ພູມສັນຖານ ແລະ ສາຍນ້ຳຂອງບ້ານ ຍາງ").

ການລົງສຳຫຼວດຂອບເຂດບ້ານຕາມລຳນ້ຳເຊບັ້ງຫຽງ (ປີ 2019)

◆ **<u>ແຫລ່ງນ້ຳດື່ມ</u>**

- ນ້ຳບາດານລວມ 7 ບໍ່, ສ່ວນຕົວ 11 ບໍ່, ຕາມແຄມຫ້ວຍແສນພັນມີນ້ຳອອກບໍ່ ເປັນນ້ຳທີ່ໃສ ແລະ ເຊບ, ຕົກແລ້ງຊາວບ້ານທີ່ຢູ່ໃກ້ຄຽງນ້ຳອອກບໍ່ ກໍພາກັນມາຕັກໄປດື່ມກິນ ເຊິ່ງຢູ່ຫ່າງຈາກບ້ານປະມານ 1 ກິໂລແມັດ.

2.2 ຊັບພະຍາກອນທຳມະຊາດ Natural Resources

◆ **<u>ເຄື່ອງປ່າຂອງດົງທີ່ປະຊາຊົນນຳໃຊ້</u>**

- ຫວາຍ: ມີຊ່ວງເດືອນ 4 ຫາເດືອນ 11.
- ໜໍ່ໄມ້: ໃນຊ່ວງລະດູຝົນແມ່ນຫາໄດ້ຜູ້ລະ 4 ຫາ 5 ສອບ/ມື້, ຫາມາເພື່ອເຮັດໜໍ່ໄມ້ແຫ້ງຂາຍໃນລາຄາ 20,000 ຫາ 25,000 ກີບ/ກິໂລກຣາມ (ມີກົດລະບຽບວ່າ: ຫ້າມຕັດມາເຮັດຮົ້ວເກີນຄວາມຈຳເປັນ).
- ມັນ, ກອຍ, ເຫັດປອກລາຄາ 5,000 ກີບ/ກິໂລກຣາມ, ເຫັດຊີ້ນ ແລະ ເຫັດລະໂງກ ສ່ວນຫຼາຍຫາມາກິນ ເຫຼືອກິນແລ້ວຈຶ່ງຂາຍພາຍໃນບ້ານລາຄາ 12,000 ກີບ/ກິໂລກຣາມ, ໃນຊ່ວງລະດູຝົນຫາໄດ້ຜູ້ລະ 10 ກິໂລກຣາມ/ມື້.
- ນອກນັ້ນຍັງມີເຫັດເພາະ, ເຫັດບົດ ແຕ່ຕົກມາປະຈຸບັນແມ່ນເລີ່ມຫາຍາກ (ມີກົດລະບຽບຫ້າມຂຸດດິນເພື່ອເອົາເຫັດ ເພາະມັນຈະບໍ່ຂຶ້ນອີກໃນປີຕໍ່ໆໄປ).

ການແປຮູບໜໍ່ໄມ້ແຫ້ງ (ປີ 2018)

ການຫາເຫັດເພາະ (ເດືອນ 5 ປີ 2019)

◆ **<u>ສັດປ່າທີ່ປະຊາຊົນນຳໃຊ້</u>**

- ຍັງພົບເຫັນແມ່ນ: ຟານ, ໝູປ່າ, ລີງ, ແລນ, ໝາ, ກະຮອກ, ກະແຕ, ກະຕ່າຍ... ຍັງມີຢູ່ແຕ່ບໍ່ຫຼາຍ, ໃນອະດີດເຄີຍເຫັນລົ່ນ;

- ປະເພດນົກ: ນົກແກ້ວ, ນົກກະໂດກ, ນົກເຄົ້າ, ນົກຈີບເຟືອງ;

◆ **<u>ສັດນ້ຳທີ່ປະຊາຊົນນຳໃຊ້</u>**

- ປາເຄິງ (ໃຫຍ່ສຸດແມ່ນ 5 ກິໂລກຣາມ, ແຕ່ໃນອະດີດເຄີຍມີຮອດ 20 ກິໂລກຣາມ), ປາປາກ (ໃຫຍ່ສຸດແມ່ນ 5 ກິໂລກຣາມ), ປາສະກາງ (ໃຫຍ່ສຸດ 3 ກິໂລກຣາມ), ປານາງ (ໃນຊ່ວງລະດູຝົນ ຫາໄດ້ຜູ້ລະ 3 ຫາ 4 ກິໂລກຣາມ/ມື້), ປາຍອນ ແລະ ສ່ວນຫຼາຍ ຫາມາໄດ້ສຳລັບປາເກັດແມ່ນຂາຍ 20,000 ກີບ/ກິໂລກຣາມ ແລະ ປາໜັງ 30,000 ກີບ/ກິໂລກຣາມ ເຊິ່ງຈະມີພໍ່ຄ້າມາຮັບຊື້ເອົາ ສ່ວນໃຫຍ່ແມ່ນຈະຫາໄດ້ຫຼາຍຊ່ວງລະດູແລ້ງ;
- ກົບ-ຂຽດ ແມ່ນຫາໄດ້ແຕ່ພໍກິນ, ກະປູຄາຍມີຫຼາຍໃນຊ່ວງຍາມຝົນ ແຕ່ບໍ່ເປັນທີນິຍົມ ສ່ວນຫຼາຍຫາມາກິນ;

ການເກັບຂໍ້ມູນຊະນິດພັນປາ (ປີ 2018)

2.3 ກະສິກຳ Agriculture

◆ **<u>ຜົນຜະລິດກະສິກຳຫຼັກ (ການຜະລິດ ແລະ ອື່ນໆ)</u>**

ເລົ້າເຂົ້າຂອງຊາວບ້ານ (ປີ 2019)

- ເຂົ້ານາ: ໃນບ້ານແມ່ນມີແຕ່ປູກເຂົ້ານາປີ ທີ່ຕ້ອງໄດ້ອາໄສນ້ຳຝົນ ເພື່ອໃຊ້ໃນການເຮັດນາ, ຄອບຄົວທີ່ຜະລິດໄດ້ໜ້ອຍສຸດແມ່ນໄດ້ 5 ສອບ/ປີ (ປະມານ175 ກິໂລກຣາມ), ຄອບຄົວທີ່ໄດ້ຫຼາຍສຸດ ແມ່ນ 2,5 ໂຕນ/ປີ;
- ເຂົ້າສວນ (ເຂົ້າໄຮ່): ຊາວບ້ານອາໄສປູກເຂົ້າໄຮ່ໃສ່ຕາມຫົວໄຮ່ປາຍນາ ຍ້ອນເຂົ້າໄຮ່ແມ່ນມີຄວາມທົນທານສູງກວ່າເຂົ້ານາທຳມະດາ ແລະ ຕ້ອງການນ້ຳໜ້ອຍ, ແຕ່ເຂົ້າໄຮ່ຈະບໍ່ງາມຄືເຂົ້ານາ, ສ່ວນຫຼາຍນິຍົມປູກເພື່ອເປັນຮີດຄອງເທົ່ານັ້ນ, ເຊິ່ງຄອບຄົວທີ່ຜະລິດໄດ້ໜ້ອຍສຸດແມ່ນໄດ້ 1 ກະບຸງ/ປີ (ປະມານ 12 ກິໂລກຣາມ), ຄອບຄົວທີ່ໄດ້ຫຼາຍສຸດແມ່ນ 350 ກິໂລກຣາມ/ປີ;
- ກ້ວຍ: ແມ່ນມີປະມານ 60 ຄອບຄົວປູກໄວ້ກິນໃນຄອບຄົວຍັງບໍ່ທັນເປັນສິນຄ້າ (ສ່ວນຫຼາຍເລີ່ມປູກເດືອນ 5 ແລະ ອອກໝາກເດືອນ 9 ອີງຕາມສະພາບດິນ ແລະ ຝຸ່ນ). ສາລີ, ມັນຕົ້ນ, ມັນດ້ຳ, ຢາສູບປູກແຕ່ບາງຄົວເຮືອນເທົ່ານັ້ນ ເລີ່ມປູກ ເດືອນ 12 ແລະ ຈະສາມາດເກັບກ່ຽວຜົນຜະລິດໄດ້ໃນເດືອນ 5.

◆ **<u>ສັດລ້ຽງ</u>**

ປະເພດສັດລ້ຽງ	ປີ/ຈຳນວນລວມ		ຈຳນວນຫຼັງຄາທີ່ລ້ຽງລວມບ້ານ	ຈຳນວນໂຕຫຼາຍສຸດຂອງຫຼັງຄາໜຶ່ງ	ຕາຍ/ຊ່ວງເດືອນ		ຂາຍ
ຄວາຍ	2017	82	-	-	13	ເດືອນ 6	28
	2018	121	32	13	-	-	ບໍ່ຮູ້
ງົວ	2017	56	-	-	15	ເດືອນ 6	4
	2018	54	110	20	-	-	ບໍ່ຮູ້
ໝູ	2017	120	-	-	20	ເດືອນ 6	8
	2018	90	70	2	-	-	ບໍ່ຮູ້
ແບ້	2017	36	-	-	5	ເດືອນ 6	ບໍ່ຮູ້
	2018	15	3	3	-	-	ບໍ່ຮູ້
ສັດປີກ	2017	360	-	-	ບໍ່ຮູ້	ທຸກຊ່ວງ	ບໍ່ຮູ້
	2018	212	70	20	-	-	ບໍ່ຮູ້

◆ **<u>ໜອງປາ</u>**

- ໜອງປາມີທັງໝົດ 11 ໜອງ.

◆ **<u>ອື່ນໆ</u>**

- ມີເຮືອພາຍ 15 ລຳ, ເຮືອຈັກ 10 ລຳ ແລະ ເຮືອບັກ 1 ລຳ;
- ມີລົດຕີວີໂລ້ 3 ຄັນ, ລົດຕູ້ 2 ຄັນ, ລົດຈັກປະມານ 50 ຄັນ , ລົດໄຖນາ 72 ຄັນ (ເຮືອນລະຄັນ) ໃຊ້ໄດ້ຈິງແມ່ນ 64 ຄັນ;
- ເຄື່ອງປັ່ນເຂົ້າ 8 ເຄື່ອງ ແລະ ເຄື່ອງສີເຂົ້າ 40 ເຄື່ອງ (ສຳລັບເຮືອນທີ່ບໍ່ມີເຄື່ອງສີເຂົ້າແມ່ນຈະໄປສີກັບເຮືອນອື່ນ ແລະ ເສຍເງິນກະສອບລະ 10,000 ກີບ ໃຫ້ເຈົ້າຂອງເຮືອນເພື່ອເສຍຄ່າໄຟຟ້າ).

ໜອງປາຂອງຊາວບ້ານ (ປີ 2019)

ຊາວບ້ານມາຢືມເຂົ້າຈາກທະນາຄານເຂົ້າຂອງບ້ານຍາງ (ປີ 2020)

ບັນຍາກາດການຝຶກອົບຮົມຍິດບາດຍິງ-ຊາຍ (ປີ 2020)

ບາງຊະນິດພັນປາທີ່ພົບເຫັນຢູ່ໃນບ້ານ ຍາງ, ເມືອງ ພີນ, ແຂວງ ສະຫວັນນະເຂດ (ລຸ່ມນ້ຳເຊບັ້ງຫຽງ)

Some Fish Species Seen in Nyang Village, Phin District, Savannakhet Province (Xebanghieng Basin)

ຈັດພິມ: ເດືອນ 3 ປີ 2021 ສຳພາດ ວັນທີ 19 ເດືອນ 3 ປີ 2019 ຊາວບ້ານທີ່ສະໜອງຂໍ້ມູນ:ບຸນກົ່ງ ໄຊຍະວົງ (ນາຍບ້ານ), ທ. ຄຳປັ່ງ, ທ. ຄຳປານ, ທ. ວົງ, ທ. ທະບຸນ ແລະ ທ່ານອື່ນໆ



ປາຟາໄລ / ອາກາເພຍ໌
Himantura polylepis
200 ຊມ / ເຊ

ປາຕອງ / ອາກາປາຕອງ
Chitala blanci
30 ຊມ / ເຊ

ປາແມວ / ອາກາແມວ
Chitala ornata
35 ຊມ / ເຊ, ຫ້ວຍ, ໜອງລ້ຽງ

ປາລີວ / ອາກາບຣີບ
Chela laubuca
5 ຊມ / ເຊ, ຫ້ວຍ, ນາ

ປາໄນ / ອາກາປາໄນ
Cyprinus carpio
70 ຊມ / ເຊ, ຫ້ວຍ, ໜອງລ້ຽງ



ປາເອິນ / ອາກາກຸໂອ໌
Probarbus jullieni
100 ຊມ / ເຊ, ຫ້ວຍ

ປາເກັດແລບ / ອາກາຊຸງນຣິ
Cyclocheilichthys armatus
18 ຊມ / ເຊ, ຫ້ວຍ, ນາ

ປາຫຼັ່ງໜາມ / ອາກາຣະໃຈ
Mystacoleucus ectypus
5 ຊມ / ເຊ, ຫ້ວຍ, ນາ

ປາສະກາງ / ອາກາຊຸ້ນວາງ
Puntioplites falcifer
20 ຊມ / ເຊ, ຫ້ວຍ,ນາ

ປາຂາວ / ອາກາກະໄປຣ
Puntius sp. (cf. orphoides)
10 ຊມ / ເຊ, ຫ້ວຍ, ນາ

ປາຂາວ / ອາກາກະໄປຣ
Sikukia spp. (cf. gudgeri)
10 ຊມ / ເຊ, ຫ້ວຍ, ນາ



ປາຂາວ / ອາກາກະໄປຣ
Parasikukia sp. (cf. maculata)
10 ຊມ / ເຊ, ຫ້ວຍ, ນາ

ປາຂາວ / ອາກາກະໄປຣ
Hypsibarbus sp. (cf. vernayi)
10 ຊມ / ເຊ, ຫ້ວຍ, ນາ

ປາປາ / ອາກາປ໊ວ
Hypsibarbus wetmorei
20 ຊມ / ເຊ, ຫ້ວຍ, ໜອງ, ນາ

ປາສຸດ / ອາກາເຣົາ
Hampala dispar
30 ຊມ / -

ປາສຸດ / ອາກາເຣົາ
Hampala macrolepidota
60 ຊມ / -

ປາຄາວມ້ນ / ອາກາຄາວມ້ນ
Catlocarpio siamensis
100 ຊມ / ເຊ



ປາເພ້ຍ / ອາກາມະຍອງ
Labeo chrysophekadion
25 ຊມ / ເຊ

ປາຫວາ / ອາກາຕະງຽ
Bangana behri
45 ຊມ / ເຊ



ປາກະບອກ / ອາກາອາ໋ງ
Cirrhinus lobatus
10 ຊມ / ເຊ, ຫ້ວຍ

ປາແກງ / ອາກາດຣິມ
Cirrhinus molitorella
30 ຊມ / ເຊ, ຫ້ວຍ



ປາເກ່ງ / ອາກາຊຸ້ນວາງ
Osteochilus melanopleura
17 ຊມ / ເຊ, ຫ້ວຍ



ປາກົດ / ອາກາຕິ
Hemibagrus sp. (cf. spilopterus)
40 ຊມ / ເຊ, ຫ້ວຍ

ປາຄົບ / ອາກາປະຄົບ
Belodontichthys truncatus
60 ຊມ / ເຊ

ປານຽງ / ອາກາຄຳວັນ
Kryptopterus apogon
70 ຊມ / ເຊ

ປານຽງ / ອາກາຄຳວັນ
Kryptopterus cheveyi
30 ຊມ / ເຊ

ປາຄຸນ / ອາກາປະຄຸນ
Wallago micropogon
100 ຊມ / ເຊ



ປາສວຍ / ອາກາປຊະ
Pangasius conchophilus
100 ຊມ / ເຊ

ປາຍອນ / ອາກາປາຍອນ
Pseudolais pleurotaenia
30 ຊມ / ເຊ, ຫ້ວຍ

ປາແຂ້ / ອາກາຕເຣັຍ
Bagarius yarrelli
100 ຊມ / ເຊ



ປາແຂ້ / ອາກາຕເຣັຍ
Glyptothorax fuscus
